## ຄວາມເປັນທຳເລື່ອງເຮືອນໝາຍຄວາມວ່າແນວໃດ?

ຄວາມເປັນທຳເລື່ອງເຮືອນໝາຍຄວາມວ່າໝົດທຸກຄົນ *ມີໂອກາດທ່ຽມກັນໃນທີ່ໄດ້ຮັບພິຈາຣະນາການເຊົ່າຫ້ອງຕ່າງໆ, ຊື້ຊັບສິນ*, ກູ້ເງິນຊື້ເຮືອນ,ແລະ ການປະກັນໄພຊັບສິນ.

## ສະພາບການຕ່າງໆເຫລົ່ານີ້ເຄີຍເກີດຕໍ່ທ່ານບໍ່?

- ທ່ານເຫັນວ່າການໂຄສະນາເໝາະສົມຕໍ່ທ່ານ. ທ່ານໄດ້ໂທຫາຕາມເລກໂທທີ່ໃຫ້ໄວ້ແລະຮູ້ວ່າອາຄານກໍ່ຍັງເປົ່າວ່າງຢູ່. ທ່ານໄດ້ນັດພົບແລະກໍ່ໄປພົບ ພໍໄປຮອດດ້ວຍຕົນເອງແລ້ວ ທ່ານກໍ່ເລີຍຖືກບອກວ່າ "ຂໍສະແດງຄວາມເສັງໃຈ, ອາຄານໄດ້ຖືກເຊົ່າແລ້ວ."
- ເວລາຊອກເຮືອນທີ່ຈະຊື້,ຄົນຈາກອົງການຂາຍບ້ານກໍ່ສືບຕໍ່ພາທ່ານຊອກເບິ່ງພຽງແຕ່ເຮືອນໃນຄຸ້ມເຂດເພື່ອນບ້ານສະເພາະທີ່ນັ້ນ.ນາຍໜ້າຂາຍບ້ານຍັງເວົ້າຄຳເຫັນອີກເຊັ່ນວ່າ"ພວກເຮົາຮູ້ສຶກວ່າເຂດນີ້ຈະເປັນບ່ອນເໝາະສົມສຳຮັບທ່ານ," "ພວກເຮົາເຊື່ອວ່າທ່ານຈະບໍ່ມີຄວາມສຸກຢູ່ເຂດເພື່ອນບ້ານນັ້ນ.."
- ທ່ານໄດ້ໂທຫາເລື່ອງອາຄານເຊົ່າ. ເມື່ອທ່ານບອກຜູ້ຈັດການວ່າມັນແມ່ນເພື່ອທ່ານແລະລູກນ້ອຍຄົນໜຶ່ງຂອງທ່ານ, ນາງໄດ້ຕອບວ່າ, "ນີ້ແມ່ນຫ້ອງເຊົ່າຢູ່ຊັ້ນສອງທີ່ມີຊານ. ຊຶ່ງມັນບໍ່ເປັນບ່ອນທີ່ດີສຳຮັບເດັກຂອງທ່ານ."
- ທ່ານໄດ້ຂໍຮ້ອງເອົາເງິນຊື້ເຮືອນຫລັງໜຶ່ງ. ໃນຂະນະທີ່ທ່ານໄດ້ເຄີຍມີບັນຫາການເງິນມາກ່ອນແລ້ວໃນອະດີດ, ມາບັດນີ້ ທ່ານມີຣາຍໄດ້ຂາເຂົ້າພຽງພໍແລ້ວ ແລະມປະວັດຄະແນນຈ່າຍທີ່ດີ.ທະນາຄານເວົ້າວ່າທ່ານບໍ່ເໝາະກັບເງື່ອນໄຂທັງຫລາຍຂອງເຂົາເຈົ້າ.
- ທ່ານກຳລັງຊື້ເຮືອນແລະຢາກຊື້ປະກັນໄພເຈົ້າຂອງເຮືອນ. ທາງຕົວແທນຊ່ຳບອກທ່ານວ່າ ເຂົາເຈົ້າບໍ່ໄດ້ຂຽນນະໂຍບາຍສຳຮັບເຂດເມືອງທີ່ທ່ານຢູ່.
- ທ່ານຕາບອດແລະມີໝານຳທາງ, ແຕ່ຜູ້ຈັດອາຄານບໍ່ໃຫ້ທ່ານເຊົ່າຍ້ອນວ່ານະໂຍບາຍ "ບໍ່ໃຫ້ມີສັດລ້ຽງຕ່າງໆ".
- ທ່ານໄດ້ຖາມເລື່ອງອາຄານເຊົ່າແລະຖືກຄິດຄ່າເຊົ່າຫລືເງິນມັດຈຳສູງກວ່າຜູ້ເຊົ່າອື່ນໆທີ່ທ່ານຄາດຄິດວ່າຈະຈ່າຍ.

**ຖ້າສະພາບການດຽວກັນຫລືຄ້າຍຄືກັນເຫລົ່ານີ້ຫາກໄດ້ເກີດກັບທ່ານ,*ທ່ານອາດເປັນຜູ້ປະສົບໄພການແຍກຊັ້ນວັນນະເລື່ອງເຮືອນ.***

## ກົດໝາຍໃດແດ່ທີ່ປົກປ້ອງທ່ານຈາກການຖືກແຍກຊັ້ນວັນນະເລື່ອງເຮືອນ?

**ທ້ອງຖິ່ນ:** ຫລາຍໆເມືອງມີອົງການສິດທິປະຊາຊົນ/ມະນຸດຕາມທ້ອງຖິ່ນຕ່າງໆ ທີ່ຫ້າມບໍ່ໃຫ້ມີການແຍກຊັ້ນວັນນະ.ໃຫ້ຕິດຕໍ່ຫາຫ້ອງການເມືອງຕາມເຂດທ້ອງຖິ່ນຂອງທ່ານເພື່ອໄດ້ຂ່າວຂໍ້ມູນ.

**ຣັດ:** "ກົດໝາຍວ່າດ້ວຍສິດທິຕ່າງໆຂອງປະຊາຊົນຂອງຣັດໄອໂອວາ" (Iowa Code 216) ຫ້າມມີການແຍກຊັ້ນວັນນະເລື່ອງເຮືອນບົນພື້ນຖານ**ເຜົ່າພັນ, ວັນນະ, ເພດ, ຄວາມໂນ້ມອຽງດ້ານເພດ, ຮູບສັນຖານເພດ, ສາສນາ, ເຄົ້າຊົນຊາດ, ພິການດ້ານຈິດ, ພິການດ້ານສຸຂະພາບ ແລະຖານະຄອບຄົວ (ມີລູກຫລາຍຄົນທີ່ຍັງຢູ່ບ້ານນຳ).**

**ປະເທດ:** ກົດໝາຍຂອງຊາດວ່າດ້ວຍສິດທິຕ່າງໆຂອງປາຊາຊົນ, ມາດຕຣາ Act of 1866 ຫ້າມການແຍກຊັ້ນວັນນະເລື່ອງເຮືອນບົນພື້ນຖານ**ເຜົ່າພັນ ຫລືສີສັນ.** ກົດໝາຍຂອງຊາດວ່າດ້ວຍສິດທິຕ່າງໆຂອງປາຊາຊົນ, ມາດຕຣາ Act of 1868, Title VIII, ແລະກົດໝາຍຂອງຊາດວ່າດ້ວຍສິດທິຕ່າງໆຂອງປາຊາຊົນ, ມາດຕຣາ Act of 1868 ແລະກົດໝາຍທີ່ຖືກດັດແປງຄວາມເປັນທຳເລື່ອງເຮືອນ 1989, the Fair Housing Amendments Act of 1989, ຫ້າມການແຍກຊັ້ນວັນນະເລື່ອງເຮືອນບົນພື້ນຖານ **ເຜົ່າພັນ , ຜິວພັນ, , ເພດ, ສາສນາ, ເຊື້ອຊາດເຄົ້າ, ຄວາມພິການ, ແລະຖານະຄອບຄົວ.**

ຖານະຄອບຄົວ, ມີລູກຫລາຍຄົນທີ່ຍັງຢູ່ບ້ານນຳ, ປົກປ້ອງຄອບຄົວທີ່ມີລູກອາຍຸຕ່ຳກວ່າ 18 ປີ. ແລະຍັງຄຸ້ມຄອງຄອບຄົວທັງຫລາຍທີ່ກຳລັງຊອກຫາສິດທິຄວາມຄຸ້ມຄອງເດັກຫລືຄອງຄອຍເກີດລູກຢູ່. ມີພຽງຂໍ້ຍົກເວັ້ນທີ່ແຄບຂໍ້ດຽວ ສຳຮັບກົດໝາຍພາກນີ້: ຫ້ອງທີ່ໝາຍພຽງສຳຮັບ "ຜູ້ອາວຸໂສທັງຫລາຍທີ່ນັ້ນ."

ຜູ້ເປັນເຈົ້າຂອງຊັບສິນແມ່ນຖືກຮຽກຮ້ອງຕາມກົດໝາຍໃຫ້ດັດແປງສົມເຫດຜົນແກ່ຊັບສິນ (ຊຶ່ງເປັນຣາຍຈ່າຍຂອງຜູ້ເຊົ່າ) ແລະເພື່ອເຮັດການດັດແປງທີ່ສົມເຫດຜົນໃນນະໂຍບາຍການອຳນວຍຄວາມສະດວກໃຫ້ ເພື່ອຄວາມສະດວກທີ່ຕອບສະໜອງຄວາມຕ້ອງການຈຳເປັນຕ່າງໆຂອງຜູ້ທີ່ພິການຕ່າງໆທັງຫລາຍ.

## ທ່ານສາມາດເຮັດແນວໃດໄດ້ ຖ້າທ່ານເຊື່ອວ່າ ທ່ານຖືກແຍກຊັ້ນວັນນະຕໍ່?

**ໃຫ້ຕິດຕໍ່ຄນະກຳມາທິການສິດທິຕ່າງໆຂອງປະຊາຊົນຂອງຣັດໄອໂອວາ ເພື່ອຮູ້ວິທີປະກອບການຮ້ອງທຸກຕໍ່ການແຍກຊັ້ນວັນນະ. ຜູ້ຊ່ຽວຊານສະເພາະເລື່ອງຄວາມເປັນທຳເຮືອນຢູ່ຈະຊ່ອຍທ່ານເລື່ອງຂ່າວຂໍ້ມູນ ແລະ,ຖ້າທ່ານມີເຫດຜົນຕ່າງໆທີ່ຈະປະກອບການຮ້ອງທຸກ, ຈະຊ່ອຍທ່ານຕື່ມຮ່າງໃບຮ້ອງທຸກ. ບໍ່ມີການເສັງຄ່າໃດຕໍ່ການບໍຣິການຕ່າງໆຂອງຄນະກຳມາທິການ. ນະກຳມາທິການກໍ່ຍັງຈະຊ່ອຍປະກອບcross-file your ການຮ້ອງທຸກຜ່ານໄຂວ່ຕໍ່ກົມເຄຫະສະຖານຂອງສະຫະຣັດແລະພັດທະນາເມືອງ (HUD) ເພື່ອປົກປ້ອງສິດທິຕ່າງໆຂອງທ່ານ ຖ້າສະພາບການຂອງທ່ານຫາກຖືກຄຸ້ມກັນໂດຍກົດໝາຍຣັດຖະບານກາງ.**

**ການຮ້ອງທຸກໃດໜຶ່ງຕ້ອງໄດ້ເຮັດຂຶ້ນຫາຄນະກຳມາທິການພາຍໃນ 300 ມື້ຈາກມື້ກ່າວຫາເລື່ອງແຍກຊັ້ນວັນນານັ້ນ. ການຮ້ອງທຸກໃດໜຶ່ງຍັງສາມາດຟ້ອງກັບຫ້ອງການ HUD ພາຍໃນໜຶ່ງປີຫລືການຟ້ອງຂຶ້ນສານເອກະຊົນສາມາດຟ້ອງໄດ້ພາຍໃນສອງປີ .**

## ການຕິດຕໍ່ຫາຄນະກຳມາທິການສິດທິຕ່າງໆຂອງປະຊາຊົນຂອງຣັດໄອໂອວາ

**Iowa Civil Rights Commission**
**400 E. 14th Street**
**Grimes State Office Building**
**Des Moines, IA 50319**
**(515) 281-4121 or (800) 457-4416**
**(515) 242-5840 (FAX)**
**www.state.ia.us/government/crc**

ໂມງເຮັດການແມ່ນ 8:00 ໂມງເຊົ້າຫາ:4:30 ຕອນບ່າຍ, ວັນຈັນເຖິງວັນສຸກ.ທ່ານອາດຝາກຄວາມທາງໂທຣະສັບເວລາໃດກໍ່ໄດ້ເພື່ອໃຫ້ໄດ້ຮັບການໂທຕອບໃນໂມງເຮັດການ.

## ເມື່ອຄຳຮ້ອງທຸກຫາກໄດ້ປະກອບຟ້ອງຂຶ້ນແລ້ວຈະມີຫຍັງເກີດຂຶ້ນ?

ຄຳຮ້ອງທຸກໃດທີ່ຟ້ອງຂຶ້ນເມື່ອໄດ້ຮັບເປັນທາງຂີດຂຽນໂດຍຄນະກຳມາທິການແລ້ວ.
ບຸກຄົນຫລືບໍຣິສັດທີ່ຖືກຟ້ອງນັ້ນກໍ່ຈະຖືກແຈ້ງໃຫ້ຊາບໃນຄຳຮ້ອງທຸກນັ້ນແລະຈະໃຫ້ໂອກາດການໂຕ້ຕອບ.

ຄຳຮ້ອງທຸກ ນັ້ນກໍ່ຈະຖືກແຕ່ງໃຫ້ຜູ້ສືບສວນໃດໜຶ່ງ, ຜູ້ຈະທຳການສືບສວນເຣື້ອງໂດຍບໍ່ເຂົ້າຂ້າງໃດແລະທີ່ຖ້ວນ. ພະຍານທັງຫລາຍກໍ່ຈະຖືກຕິດຕໍ່ຫາແລະບັນທຶກຕ່າງໆກໍ່ຈະຖືກກວດສອບ. ທຸກຝ່າຍກໍ່ອາດຈະໃຫ້ໂອກາດເຈຣະຈາກັນໂດຍສະມັກໃຈ, ການຕົກລົງກັນໂດຍບໍ່ຕ້ອງສູ້ຄວາມ.

ພາຍຫລັງການສືບສວນ, ຜູ້ພິພາກສາກົດໝາຍຝ່າຍປົກຄອງຈະຕັດສິນສາເຫດຂອງຄະດີທີ່ອາດມີ (ການແຍກຊັ້ນວັນນະທີ່ອາດເກີດມີ) ຫລືບໍ່ອາດມີສາເຫດ(ການແຍກຊັ້ນວັນນະທີ່ບໍ່ອາດເກີດມີ). ຖ້າການຕັດສິນຫາກເຫັນວ່າບໍ່ມີສາເຫດ, ຄວາມຮ້ອງທຸກນັ້ນກໍ່ຈະຖືກລຶບລ້າງ, ໂດຍສັງກັດຢູ່ໃນສິດທິຕ່າງໆຕໍ່ການອຸທອນ.

ຕິດຕາມການຕັດສິນທີ່ພົບເຫັນວ່າມີການແຍກຊັ້ນວັນນະ ຝ່າຍທັງຫລາຍອາດເລືອກຕັ້ງເອົາການແກ້ຂໍ້ຂັດແຍ່ງນັ້ນໃຫ້ແກ້ຢູ່ໃນສານທ້ອງຖິ່ນ, ຫລືການຟັງເຣື່ອງມວນຊົນຕໍ່ໜ້າຄນະກຳມາທິການ.

## ການບໍຣິການຕ່າງໆ ຈາກຄນະກຳມາທິການສິດທິປະຊາຊົນຂອງໄອໂອວາມີແນວໃດໃວ້ໃຫ້ແດ່?

ຄນະກຳມາທິການຮັບ, ສືບສວນ, ແລະແກ້ໄຂຄວາມຮ້ອງທຸກທີ່ກ່າວຫາການແຍກຊັ້ນວັນນະ ຕາມບ່ອນເຮັດວຽກ, ເຮືອນຢູ່, ການອຳນວຍຄວາມສະດວກມວນຊົນ,ຄະແນນເຊື່ອ, ແລະການສຶກສາ.

ຄນະກຳມາທິການຍັງສາມາດຈັດໃຫ້ມີຜູ້ເວົ້າແລະມີໂຄງການຕ່າງໆໃນວິຊາສິດທິຕ່າງໆຂອງປະຊາຊົນ ຊຶ່ງຮວມຄວາມເປັນທຳ ເຮືອນຢູ່. ແລະຍັງມີການຈັດພິມຂ່າວສານທີ່ບໍ່ຄິດຄ່າອີກ, ຫໍສະມຸດເຊົ່າວີດີໂອເຣື່ອງສິດທິຕ່າງໆຂອງປະຊາຊົນ, ແລະຫໍສະມຸດເຊົ່າປຶ້ມຕ່າງໆເຣື່ອງປະວັດສາດສິດທິຕ່າງໆ, ແລະບັນຫາຄວາມແຕກຕ່າງກັນ.
ຄນະກຳມາທິການອາດເຮັດການທົດສອບເຈົ້າຂອງບ້ານເຊົ່າ, ທຸຣະກິດ, ແລະນາຍຈ້າງທັງຫລາຍ
ເພື່ອສຶກສາທຳມະຊາດແລະການແຜ່ຂຍາຍຂອງການແຍກຊັ້ນວັນນະຢູ່ໄອໂອວາ,
ແລະເພື່ອຕັດສິນໄດ້ວ່າຖ້າກົດໝາຍຕ່າງໆເຣື່ອງສິດທິຂອງປະຊາຊົນຫາກຖືກ.
ຄນະກຳມາທິການເຮັດວຽກກັບຊຸມຊົນທັງຫລາຍທົ່ວຣັດເພື່ອຈັດຕັ້ງທີມງານທີ່ພໍໃຈຕໍ່ຄວາມແຕກຕ່າງກັນ.

ທີມງານຈະເຮັດວຽກກັບບັນຫາຄວາມແຕກຕ່າງກັນແລະບັນຫາຕ່າງໆພາຍໃນຊຸມຊົນສະເພາະນັ້ນເພື່ອຕໍ່ສູ້ກັບການແຍກຊັ້ນວັນນະ ແລະໂຕ້ຕອບກັບອາຊະຍາກຳຄວາມກຽດຊັງ.

ຄນະກຳມາທິການຍັງສົ່ງເສີມການໃຊ້ການຮຽນຮູ້ທີ່ອ້ອມວົງກັນຫລາຍ(ກຸ່ມນ້ອຍອະທິບາຍເຫດຜົນນຳກັນທີ່ກ່ຽວກັບເຜົ່າພັນແລະບັນຫາອື່ນໆນຳອີກ..

***ເປົ້າໝາຍຂອງພວກເຮົາກໍ່ຄືເປັນຣັດທີ່ປອດຈາກການແຍກຊັ້ນວັນນະ.***

***ຈິນຕະນາການຂອງພວກເຮົາແມ່ນບັງຄັບໃຊ້ສິດທິຕ່າງໆຂອງປະຊາຊົນ, ຜ່ານການເຮັດໃຫ້ຖືກຕ້ອງກັບ, ການອອກໜ້າເປັນຕົວແທນ,ການໄກ່ເກັ່ງ, ແລະການສຶກສາ***

# ຄວາມເປັນທຳເຣື່ອງເຮືອນ ແລະທ່ານ

EQUAL HOUSING OPPORTUNITY

## ຄນະກຳມາທິການສິດທິຕ່າງໆຂອງປຊົນເມືອງໄອໂອວາ

**Grimes State Office Building**
**400 E. 14th Street**
**Des Moines, IA 50319**

**515-281-4121**
**800-457-4416**
**FAX: 515-242-5840**
**http://www.state.ia.us/government/crc**

ການພິມຂ່າວສານນີ້ໄດ້ກໍ່ຍ້ອນທຶນຂອງກົມເຄຫະສະຖານສະຫະຣັດ ແລະການພັດທະນາເມືອງ, ໂຄງການຣິເລີ່ມຄວາມເປັນທຳເຮືອນຢູ່